ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 10 ຫາ 14 ມິຖຸນາ 2024




ຝຶກອົບຮົມການສ້າງຄູຝຶກກ່ຽວກັບການວາງແຜນ ທີ່ເອົາໃຈໃສ່ບົດບາດ ຍິງ-ຊາຍ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ຝຶກອົບຮົມການສ້າງຄູຝຶກກ່ຽວກັບການວາງແຜນ ທີ່ເອົາໃຈໃສ່ວຽກບົດບາດ ຍິງ-ຊາຍ

ໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ເພື່ອໃຫ້ເຫັນໄດ້ເຖິງຄວາມສຳຄັນຂອງການເຊື່ອມສານວຽກບົດບາດຍິງ-ຊາຍ ໃຫ້ກັບຄອບຄົວຊາວກະສິກອນທີ່ປູກກາເຟ ໃນລະຫວ່າງວັນທີ 3-6 ມິຖຸນາ 2024 ນີ້, ທີ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ວຽງພູຄາ ແຂວງ ຫຼວງນ້ຳທາ, ໂດຍໄດ້ຮັບການສະໜັບສະໜູນຈາກ ໂຄງການສ້າງຄວາມເຂັ້ມແຂງ ດ້ານການຄ້າໃຫ້ແກ່ຂະແໜງກາເຟພາກເໜືອລາວ, ພະແນກ ສົ່ງເສີມຄວາມກ້າວໜ້າແມ່ຍິງ ແລະ ແມ່-ເດັກ ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດຝຶກອົບຮົມ ການສ້າງຄູຝຶກ ກ່ຽວກັບການວາງແຜນທີ່ເອົາໃຈໃສ່ວຽກບົດບາດຍິງ-ຊາຍ ໃຫ້ກັບບັນດາຄູ່ຮ່ວມງານ ຜູ້ຈັດຕັ້ງປະຕິບັດໂຄງການຍ່ອຍ, ວິຊາການ, ຜູ້ປະສານງານຄວາມກ້າວຂອງແມ່ຍິງ ແລະ ແມ່-ເດັກ ທີ່ນອນໃນໂຄງການສ້າງຄວາມເຂັ້ມແຂງດ້ານການຄ້າໃຫ້ແກ່ຂະແໜງກາເຟພາກເໜືອລາວ 06 ເມືອງ ຈາກ 04 ແຂວງເປົ້າໝາຍໂຄງການຄື ແຂວງ ຫຼວງນ້ຳທາ (ເມືອງ ວຽງພູຄາ), ແຂວງ ຜົ້ງສາລີ (ເມືອງ ຂວາ, ເມືອງ ໃໝ່), ແຂວງ ອຸດົມໄຊ (ເມືອງ ແບງ) ແລະ ແຂວງ ຫຼວງພະບາງ (ເມືອງ ວຽງຄຳ, ເມືອງ ຊຽງເງິນ) ເຂົ້າຮ່ວມ 28 ທ່ານ ຍິງ 21 ທ່ານ ພ້ອມດ້ວຍທີມງານຄູຝຶກຈາກພະແນກສົ່ງເສີມຄວາມກ້າວໜ້າແມ່ຍິງ ແລະ ແມ່-ເດັກ ລວມທັງໝົດ 33 ທ່ານ, ໂດຍການເປັນປະທານເປີດຊຸດຝຶກອົບຮົມຄັ້ງນີ້ຂອງທ່ານ ນາສະຫວັດ ຊາຊຸນຄຳ ຮອງຫົວໜ້າພະແນກ ກະສິກຳແລະປ່າໄມ້ເມືອງວຽງພູຄາ.

ຈຸດປະສົງ ຂອງການຝຶກອົບຮົມຄັ້ງນີ້ ແມ່ນເພື່ອສ້າງຄູຝຶກກ່ຽວກັບການວາງແຜນທີ່ເອົາໃຈໃສ່ວຽກບົດບາດຍິງ-ຊາຍ ເຊິ່ງນັກສຳມະນາກອນໄດ້ຮຽນຮູ້ກ່ຽວກັບ ທັກສະການເປັນຄູຝຶກທີ່ດີການຕັ້ງຄຳຖາມ, ການສັງເກດ, ການບັນທຶກຂໍ້ມູນ, ການກະກຽມຂອງທີມງານຜູ້ອຳນວຍຄວາມສະດວກທີ່ຈະເປັນຜູ້ລົງເກັບກຳຂໍ້ມູນ ແລະ ວິເຄາະບົດບາດຍິງ-ຊາຍໃນການປູກກາເຟໃນພື້ນທີ່ເປົ້າໝາຍ

ໂຄງການ, ການແນະນຳກ່ຽວກັບເຄື່ອງມືຂອງການຮຽນຮູ້ດ້ານບົດບາດຍິງ-ຊາຍ ໃນການຈັດຕັ້ງປະຕິບັດເຂົ້າໃນໂຄງການກາເຟລາວ ການວາງແຜນກິດຈະກຳ ຂອງແຕ່ລະໂຄງການຍ່ອຍ ແລະ ການຕິດຕາມກວດກາ ແລະ ປະເມີນຜົນ ການແບ່ງກຸ່ມສົນທະນາກ່ຽວກັບການນຳໃຊ້ຄູ່ມືການຝຶກອົບຮົມ ພ້ອມທັງການທົດລອງປະຕິບັດຕົວຈິງໃນການນຳໃຊ້ຊຸດເຄື່ອງມືວິເຄາະວຽກບົດບາດຍິງ-ຊາຍ ເພື່ອໃຫ້ສາມາດ ແລະ ວິເຄາະເອົາຂໍ້ມູນມາຊ່ວຍໃນການປັບປຸງ ແລະ ພັດທະນາ ວຽກບົດບາດຍິງ-ຊາຍ ໃນໂຄງການກາເຟລາວ ກໍ່ຄືໃນຂະແໜງກະສິກຳ ແລະ ປ່າໄມ້









ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;